ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທພລ ຈັບມືກັບທະນາຄານກຸງສີ ບໍລິການໂອນເງິນລະຫວ່າງປະເທດ




ທະນາຄານພັດທະນາລາວ (ທພລ) ຮ່ວມກັບທະນາຄານກຸງສີອະຍຸດທະຍາ ມະຫາຊົນ ຈຳກັດ ຮ່ວມກັນຈັດພິທີເປີດໂຕ ຢ່າງເປັນທາງການຜ່ານລະບົບປະຊຸມທາງໄກ (Virtual conference) "ການໃຫ້ບໍລິການລະບົບໂອນເງິນລະຫວ່າງປະເທດ ແບບ Real Time" ໃນວັນທີ 12 ຕຸລາ 2020 ທີ່ໂຮງແຮມຄຣາວພລາຊາ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ທພລ; ທ່ານ ປອ.ອາຄົມ ປຣະເສີດ ຜູ້ອຳນວຍການ ທພລ ພ້ອມຄະນະ; ສຳລັບຝ່າຍໄທແມ່ນຈັດຂຶ້ນທີ່ບາງກອກ ປະເທດໄທ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານນາງ ບຸດສະກອນ ທີລາປັນຍາໄຊ ຜູ້ອຳນວຍການອາວຸໂສ ຝ່າຍນະໂຍບາຍລະບົບການຊຳລະເງິນ, ທະນາຄານແຫ່ງ ປະເທດໄທ; ທ່ານ ແດນ ຣາໂຊໂນ ຄະນະກຳມະທິການຜູ້ບໍລິຫານທະນາຄານກຣຸງສີອາຍຸດທະຍາ ມະຫາຊົນ ຈຳກັດ ປະເທດໄທ ພ້ອມຄະນະ.

ພິທີເປີດໂຕໃນຄັ້ງນີ້, ກໍ່ເພື່ອເປັນສືບຕໍ່ພັດທະນາດ້ານການບໍລິການທັນໄປສູ່ທັນສະໄໝ ຕອບສະໜອງແກ່ສັງຄົມ, ທພລ ໄດ້ເລີ່ມຕົ້ນສ້າງສາຍສຳພັນ ແລະ ຮ່ວມມືກັບທະນາຄານກຣຸງສີ ເຊິ່ງເປັນທະນາຄານໃຫຍ່ອັນດັບຕົ້ນໆຂອງປະເທດໄທ ແລະ ກໍ່ມີສາຂາຕັ້ງຢູ່ນະຄອນຫຼວງວຽງຈັນ, ມີການພັດທະນາ ແລະ ສະໜອງການບໍລິການ ທີ່ມີຄວາມຫຼາກຫຼາຍ ແລະ ທັນສະໄໝ ມີຄວາມ

ພ້ອມໃນການເຊື່ອມໂຍງໃນລະດັບສາກົນ. ໃນປີ 2019 ທພລ ແລະ ທະນາຄານກຸງສີ ໄດ້ມີການປຶກສາຫາລືກັນ ກ່ຽວກັບຄວາມເປັນໄປໄດ້ໃນການຮ່ວມມືລະຫວ່າງ 2 ຝ່າຍ ເພື່ອສະໜອງການບໍລິການໃຫ້ແກ່ລູກຄ້າທັງ 2 ທະນາຄານ. ຜ່ານການປຶກສາຫາລືເຖິງຈະເປັນໄລຍະເວລາອັນສັ້ນ ແຕ່ທັງ 2 ຝ່າຍ ໄດ້ມີການຕົກລົງໃຫ້ມີການເຊື່ອມໂຍງລະບົບການຊຳລະສະສາງລະຫວ່າງປະເທດຮ່ວມກັນ, ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າ ທີ່ເປັນນິຕິບຸກຄົນ ແລະ ບຸກຄົນ ສາມາດດຳເນີນທຸລະກຳການໂອນເງິນຊຳລະສະສາງລະຫວ່າງປະເທດ (ລາວ ແລະ ໄທ) ໄດ້ຢ່າງວ່ອງໄວ, ສະດວກສະບາຍ ແລະ ມີຄ່າທຳນຽມຕ່ຳ ເປັນການສ້າງເງື່ອນໄຂໃຫ້ຜູ້ປະກອບການຫຼຸດຕົ້ນທຶນໃນການດຳເນີນທຸລະກຳທາງດ້ານການເງິນ ຖືເປັນການຊຸກຍູ້ບັນດາຂະແໜງການທຸລະກິດພາຍໃນປະເທດ ເຊິ່ງກໍ່ເປັນອີກຮູບແບບໜຶ່ງໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ສຳລັບຜູ້ໃຊ້ແຮງງານ ກໍ່ຈະສາມາດໂອນເງິນກັບບ້ານ ດ້ວຍຄ່າທຳນຽມທີ່ຕ່ຳ ເຊິ່ງຈະເຮັດໃຫ້ທຸລະກຳການໂອນເງິນເຂົ້າ-ອອກຜ່ານລະບົບທະນາຄານເພີ່ມຂຶ້ນ, ຖືເປັນການກະຕຸ້ນເສດຖະກິດເຊັ່ນກັນ.




ໂຄງການດັ່ງກ່າວນີ້ ໄດ້ຈັດຕັ້ງປະຕິບັດນັບແຕ່ເດືອນ ກຸມພາ 2020 ມາຮອດປະຈຸບັນ ແມ່ນມີຄວາມພ້ອມທີ່ຈະສະໜອງການບໍລິການໃຫ້ແກ່ລູກຄ້າຂອງທັງ 2 ທະນາຄານ ເຊິ່ງໂຄງການໄລຍະທຳອິດນີ້ ລູກຄ້າຈະສາມາດໂອນເງິນຈາກລາວ ຫາ ໄທ ຜ່ານ ປ່ອງບໍລິການຂອງ ທພລ ທົ່ວປະເທດ, ໄລຍະຕໍ່ໄປຈະກ້າວໄປສູ່ການໂອນເງິນ ໂດຍຜ່ານ Mobile Banking ແລະ Internet Banking ຂອງ ທພລ ແລະ ກ້າວໄປສູ່ການ ເຊື່ອມໂຍງການບໍລິການຜ່ານຕູ້ ATM, ເຄື່ອງຮູດບັດ EDC ແລະ QR Code ຮ່ວມກັນ. ພິເສດນັບແຕ່ເດືອນຕຸລາ ເຖິງເດືອນທັນວາ ປີ 2020 ນີ້; ທະນາຄານ ໄດ້ມີໂປຣໂມຊັນ ສຳລັບລູກຄ້າທີ່ເຂົ້າມາໃຊ້ບໍລິ ການດັ່ງກ່າວ ຄື: ຍົກເວັ້ນຄ່າທຳນຽມການໂອນເງິນຈາກ ໄທມາລາວ ແລະ ເກັບຄ່າທຳນຽມພຽງ 50% ສຳລັບລູກຄ້າທີ່ໂອນເງິນ ຈາກ ລາວໄປ ໄທ.

ໃນພິທີສຳຄັນນີ້, ບັນດາຄະນະນຳຈາກ 2 ທະນາຄານກາງ ແລະ ຄູ່ທະນາຄານທຸລະກິດ ໄດ້ພົດປຸ່ງກັນມີຄຳເຫັນ ໂດຍໄດ້ສ່ອງແສງໃຫ້ເຫັນວ່າ: ການເຮັດທຸລະກິດສ່ວນໃຫຍ່ ແມ່ນເຊື່ອມຕໍ່ເຂົ້າເຖິງລະບົບອອນລາຍທັງໃນພາກພື້ນ ແລະ ທົ່ວໂລກ. ດ້ວຍເຫດນີ້, ການດຳເນີນທຸລະກຳການຊຳລະສະສາງໃນລະບົບທະນາຄານ ກໍ່ຄືຈະບໍ່ຢູ່ພຽງແຕ່ພາຍໃນປະເທດເທົ່ານັ້ນ ແຕ່ກໍ່ສາມາດສ້າງກົນໄກທີ່ອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ບັນດາຫົວໜ່ວຍທຸລະກິດ ລວມເຖິງທະນາຄານ ທີ່ເປັນສື່ກາງທາງການເງິນ ຈຶ່ງມີຄວາມຈຳເປັນໃນການປັບໂຕ ແລະ ພັດທະນາເຄື່ອງມືທີ່ທັນສະໄໝທີ່ສາມາດຮອງຮັບໄດ້ທັນກັບສະພາບການ ແລະ ກໍ່ເປັນການຮ່ວມມືກັນລະຫວ່າງ 2 ທະນາຄານດັ່ງກ່າວ ທີ່ເປັນນິມິດໝາຍທີ່ດີ ທີ່ໃຫ້ປະໂຫຍດແກ່ປະຊາຊົນທັງ 2 ຊາດ ກໍ່ຄືປະກອບສ່ວນເຂົ້າໃນການພັດທະນາຂະແໜງການທະນາຄານຂອງ ສປປ ລາວ ແລະ ໄທ ນຳອີກ.

# ຂ່າວ-ພາບ: ຣັດສະໝີ ດວງສັດຈະ

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ